Australian Government
Australian Centre for
International Agricultural Research

# ແຜນການປະຕິບັດງານປະຈຳປີ 2008-2009: ຂໍ້ຄວາມທີ່ຄັດເປັນພາສາລາວ



www.aciar.gov.au

*ການຄົ້ນຄວ້າທີ່ໃຊ້ງານໄດ້*

© ສະຫະພັນ ອອສເຕຣເລຍ 2008
ວຽກງານນີ້ແມ່ນສະຫງວນລິຂະສິດ.
ການນຳໃຊ້ແຜນວຽກນີ້ນອກໄປຈາກການອະນຸຍາດພາຍໃຕ້ກົດໝາຍທີ່ໃຫ້ຄວາມຄຸ້ມຄອງປີ 1968 ແລ້ວ, ຫ້າມລອກແບບສ່ວນໃດສ່ວນໜຶ່ງຂອງສິ່ງພິມນີ້ບໍ່ວ່າຈະດ້ວຍວິທີໃດໆໂດຍບໍ່ໄດ້ຮັບອະນຸຍາດທີ່ເປັນລາຍລັກອັກສອນຈາກສະຫະພັນ ອອສເຕຣເລຍ ເສຍກ່ອນ.ການຂໍຮ້ອງ ແລະ ຄຳຖາມຕ່າງໆທີ່ກ່ຽວຂ້ອງ ກັບການລອກແບບ ແລະ ສິດທິດັ່ງກ່າວ ຄວນສົ່ງໄປທີ່ ຄະນະກຳມະການຄວບຄຸມ ລິຂະ ສິດ ຄອມມອນເວລ, ກະຊວງໄອຍາການສູງສຸດ, ສຳນັກງານ Robert Garran Offices, National Circuit, Barton ACT 2600 ຫຼື ທີ່ <http://www.ag.gov.au/cca>.

ຈັດພິມໂດຍ ສູນກາງການຄົ້ນຄວ້າກະສິກຳສາກົນປະເທດອອສເຕຣເລຍ (ACIAR)
GPO BOX 1571, Canberra, ACT 2601,
Australia
ໂທລະສັບ: 61 2 6217 0500
aciar@aciar.gov.au

**ແຜນປະຕິບັດງານ ປະຈຳປີ 2008 – 09 ຂອງ ACIAR: ສະບັບຄັດລອກ ເປັນພາສາ ລາວ**

ISBN 978 1 921434 94 5 (print)
ISBN 978 1 921434 95 2 (online)

**ການແຈກຢາຍ**

ແຜນການນີ້ມີໄວ້ໃຫ້ ໂດຍຜ່ານເວັບໄຊຕ໌ <www.aciar.gov.au> ຫຼືວ່າໂດຍການຕິດ ຕໍ່ ACIAR ໂດຍທາງອີເມລ໌ <comms@aciar.gov.au> ຫຼື ໂທມາທີ່ (02 6217 0500) ຫຼື ແຟັກ (02 6217 0501) ເພື່ອຂໍເອົາສຳເນົາ.

## ກ່ຽວກັບ ACIAR

**ACIAR ແມ່ນຫຍັງ?**

ສູນກາງຄົ້ນຄວ້າກະສິກຳສາກົນອອສເຕຣເລຍ (ACIAR)ແມ່ນສະຖາບັນນຶ່ງ ເຊິ່ງໄດ້ຮັບ ສິດອຳນາດຕາມກົດໝາຍໃນການປະຕິບັດໜ້າທີ່ພາຍໃນກະຊວງການຕ່າງປະເທດແລະການຄ້າ. ກິດຈະກຳຂອງພວກເຮົາແມ່ນສ່ວນນຶ່ງຂອງໂຄງການຊ່ວຍເຫຼືອຂອງປະເທດອອສເຕຣເລຍ,ທີ່ມີເປົ້າໝາຍໃນການພັດທະນາຜົນປະໂຫຍດແຫ່ງຊາດຂອງປະເທດອອສເຕຣເລຍໂດຍຜ່ານການຫຼຸດຜ່ອນຄວາມທຸກຍາກ ແລະການພັດທະນາທີ່ໝັ້ນຄົງ. ACIAR ໄດ້ຖືກສ້າງຕັ້ງຂຶ້ນໃນປີ 1982 ເພື່ອຊ່ວຍເຫຼືອແລະ ຊຸກຍູ້ໃຫ້ນັກວິດທະຍາສາດດ້ານກະສິກຳໃນປະເທດອົດສະຕາລີ ນຳໃຊ້ຝີມືຄວາມຊຳນານເພື່ອຜົນປະໂຫຍດຂອງ ປະເທດທີ່ກຳລັງພັດທະນາ,ແລະໃນຂະນະດຽວ ກັນກໍ່ສາມາດແກ້ປັນຫາການກະສິກຳ ຂອງປະເທດອອສເຕຣເລຍນຳອີກ.

ການຄົ້ນຄວ້າທີ່ໃຫ້ທຶນໂດຍ ACIAR ມຸ້ງໝາຍຊ່ອຍເຫຼືອປະເທດທີ່ກຳລັງພັດທະນາໃຫ້ ຊ່ອຍຕົນເອງໂດຍການໃຫ້ວິທີການແກ້ໄຂບັນຫາກະສິກຳ ແລະສ້າງຄວາມສາມາດຂອງການຄົ້ນຄວ້າ.

**ພວກເຮົາປະຕິບັດວຽກງານຢູ່ໃສ**

ACIAR ສະໜັບສະ ໜູນໂຄງການຕ່າງໆຢູ່ 5 ຂົງເຂດ: ຂົງເຂດປາປົວນິວກີນີ ແລະ ບັນດາປະເທດທີ່ຢູ່ໃນຂົງເຂດເກາະປາຊີຟິກ, ພາກຕາເວັນອອກສ່ຽງໃຕ້, ເອເຊຍໃຕ້, ເອເຊຍເໜືອ ແລະ ອາຟຼິກາໃຕ້.

**ພວກເຮົາເຮັດຫຍັງ**

ACIAR ມອບໝາຍໃຫ້ກຸ່ມ ແລະສະຖາບັນການຄົ້ນຄວ້າໃຫ້ດຳເນີນໂຄງການຄົ້ນຄວ້າ ດ້ານກະສິກຳຮ່ວມກັບປະເທດທີ່ກຳລັງພັດທະນາ. ACIAR

- ສະໜັບສະໜູນການຄົ້ນຄວ້າໃນການປັບປຸງຄໍ້າຊູຜົນຜະລິດກະສິກຳໃຫ້ມີ ຄວາມຍືນຍົງໃນປະເທດທີ່ກຳລັງພັດທະນາ
- ໃຫ້ທຶນແກ່ການຝຶກອົບຮົມທີ່ມີຄວາມກ່ຽວຂ້ອງກັບໂຄງການ (ຂັ້ນສູງກວ່າປະລິນຍາຕີ ແລະ ການຝຶກອົບຮົມໄລຍະສັ້ນ)
- ຖ່າຍທອດຜົນທີ່ໄດ້ຮັບຈາກການຄົ້ນຄວ້າ
- ດຳເນີນການ ແລະໃຫ້ເງິນທຶນໃນການພັດທະນາກິດຈະກຳກ່ຽວຂ້ອງກັບແຜນງານຂອງການຄົ້ນຄ້ວາ
- ບໍລິຫານການຊ່ວຍເຫຼືອຂອງລັດຖະບານອອສເຕຣເລຍ ທີ່ມີໃຫ້ແກ່ສູນກາງຄົ້ນ ຄວ້າກະສິກຳສາກົນ

**ສຳລັບຂໍ້ມູນເພີ້ມເຕີມ ຫຼື ສະແດງຄວາມເຫັນ, ຈົ່ງຕິດຕໍ່:**

ACIAR
GPO Box 1571
Canberra ACT 2601
AUSTRALIA

ໂທ: + 61 2 6217 0500
ອິນເຕີເນັດ: www.aciar.gov.au
ອີເມລ໌: aciar@aciar.gov.au

*ຮູບຖ່າຍປົກ: ຮູບການເກັບກ່ຽວຂອງຊຸມຊົນໃນປະເທດອິນໂດເນເຊຍ*

ພິມທີ່: Paragon Printing, Canberra



# ສາລະບານ


ສານຈາກ ລັດຖະມົນຕີ ແລະ ເລຂາລັດຖະສະພາ iv

ທົດນຳຈາກປະທານແລະຜູ້ບໍລິຫານສູງສຸດ 1

ຈຸດເດັ່ນ 2

ແຜນງານຄົ້ນຄວ້າແລະພັດທະນາ 10

ປະເທດປາປົວນິວກີນີ ແລະບັນດາປະເທດທີ່ຢູ່ເກາະປາຊີຟິກ 11

ປະເທດປາປົວນິວກີນີ 12

ບັນດາປະເທດທີ່ຢູ່ເກາະປາຊີຟິກ 19

ບັນດາປະເທດເອເຊຍຕາເວັນອອກສ່ຽງໃຕ້ 25

ອິນໂດເນເຊຍ 26

ຫວຽດນາມ 36

ຟີລິບປິນ 41

ຕີມໍຕາເວັນອອກ 46

ກຳປູເຈຍ 48

ລາວ 53

ໄທ 57

ພະມ້າ 59

ເອເຊຍໃຕ 60

ອິນເດຍ 61

ປະກິດສະຖານ 66

ບັງກະລາເທດ 69

ກຸ່ມປະເທດເອເຊຍໃຕ້ອື່ນໆ ແລະ ກຸ່ມປະເທດຕາເວັນອອກກາງ : ພູຖານ, ອັຟການິສະ ຖານ ແລະ ອີຣັກ 70

ເອເຊຍເໜືອ 72

ຈີນ 73

ອາຟຼິກາໃຕ້ 77

ອາຟຼິກາໃຕ້ 78

ໂຄງການທີ່ປະກອບດ້ວຍຫຼາຍຝ່າຍ 80

ພັດທະນາຄວາມສາມາດ: ການຝຶກອົບຮົມແລະການສຶກສາ 84

ການປະເມີນຜົນກະທົບຈາກໂຄງການການຄົ້ນຄວ້າ 86

ຖ່າຍທອດຜົນທີ່ໄດ້ຮັບຈາກການຄົ້ນຄ້ວາ 88

ການຈັດການແຜນການບໍລິຫານ 89

ບັນດາພາກຜະນວກ 90

| | | |
|---|---|---|
| ພາກຜະນວກ 1ກ: | ພາກສ່ວນຍຸດທະສາດຕ່າງໆຂອງ ACIAR ສຳຫຼັບປີ 2008–09 | 91 |
| ພາກຜະນວກ 1ຂ: | ບັນຫາຮີບດ່ວນທີ່ຕ້ອງແກ້ໄຂ ໃນປີ 2008–09 | 95 |
| ພາກຜະນວກ 1ຄ: | ປະເທດທີ່ເນັ້ນໃນລາຍການການຄົ້ນຄວ້າພັດທະນາຂອງສູນກາງຄົ້ນ ຄວ້າກະສິກຳສາກົນປະເທດອົດສະຕາລີ (ACIAR’s R&D) 2008-09 | 98 |
| ພາກຜະນວກ 1ງ: | ການເຮັດໃຫ້ໜ້າທີ່ຂອງໂຄງການ (ACIAR) ມີຄວາມດຸນດ່ຽງການອອກແບບໂຄງການແລະການນຳສົ່ງ | 100 |
| ພາກຜະນວກ 1ຈ: | ການພົວພັນຂອງ ACIAR ກັບບັນດາອົງການເອກະຊົນແລະອົງການ ຈັດຕັ້ງຊຸມຊົນ | 101 |
| ພາກຜະນວກ 2: | ຜົນປະໂຫຍດທີ່ປະເທດອົດສະຕາລີໄດ້ຮັບ | 102 |
| ພາກຜະນວກ 3: | ໂຕຊີ້ບອກການພັດທະນາຂອງໂລກທີ່ຖືກເລືອກ | 108 |
| ພາກຜະນວກ 4: | ພືດທີ່ສຳຄັນ, ການລ້ຽງສັດແລະ ການປະມົງ, ໂຕຊີ້ບອກການຜະລິດ ໂດຍບັນດາປະເທດຮ່ວມ | 110 |
| ພາກຜະນວກ 5: | ໂຕຊີ້ບອກຫຼັກຂອງປ່າໄມ້ສຳລັບບັນດາປະເທດຄູ່ຮ່ວມ | 114 |
| ພາກຜະນວກ 6: | ຊື່ຫຍໍ້ ແລະ ອັກສອນຫຍໍ້ | 115 |

ປຶ້ມຮວບຮວມຊື່ຂອງອົງການ 116

# ຈຸດເດັ່ນ

## ລັກສະນະສະເພາະ

ແຜນການປະຕິບັດງານປະຈຳສົກປີ 2008-2009 (AOP) ໄດ້ເຂົ້າ ຮ່ວມຈຸດສຸມໃໝ່ເລື້ອງການຫຼຸດຜ່ອນຄວາມທຸກຍາກໃນໂຄງການການຊ່ວຍເຫຼືອຂອງປະເທດອອສເຕຣເລຍ. ໄດ້ມີການສັບປ່ຽນ ຢ່າງຕໍ່ເນື່ອງໃນການລົງທຶນຂອງ (ACIAR) ໄປສູ່ກຸ່ມປະເທດທີ່ມີຄວາມທຸກຍາກ ໃນພາກພື້ນ. ໂດຍສະເພາະແມ່ນໃນປີນີ້, ແຜນການ (AOP) ແມ່ນສະທ້ອນໃຫ້ເຫັນການເນັ້ນໜັກໃສ່ພາກພື້ນທີ່ຍັງລ່າຫຼັງໃນບັນດາ ປະເທດຮ່ວມທີ່ສຳຄັນ (ຟີລິບປິນໃຕ້, ອິນໂດເນເຊຍຕາເວັນອອກ, ເຂດຝັ່ນຕົກທາງຕາເວັນອອກຂອງອິນເດຍ ແລະ ຈີນພັດທະນາ, ຊາຍຝັ່ງທາງໃຕ້ ແລະ ທາງຕາເວັນຕົກສ່ຽງເໜືອຂອງຫວຽດນາມ) ຊຶ່ງ ເປັນເຂດທີ່ຍັງມີຄວາມທຸກຍາກຢູ່. ໃນໂຄງການພັດທະນາໃຫມ່ໃນຂົງເຂດດັ່ງກ່າວນີ້, ກໍ່ຍັງມີການເຂົ້າຮ່ວມຫຼາຍຂອງກຸ່ມທີ່ບໍ່ໄດ້ຮັບຄວາມສຳຄັນ (ຮວມເຖິງ ກຸ່ມກະສິກຳລາຍຍ່ອຍ, ຊົນຊາດຄົນກຸ່ມນ້ອຍ ແລະ ແມ່ຍິງ).

ແຜນການຍຸດທະສາດທີ່ມີລັກສະນະສະເພາະຂອງປະເທດນຶ່ງແມ່ນມີການຜະສົມຜະ ສານກັບໂຄງການຊ່ວຍເຫຼືອປະກົດຂື້ນໃໝ່ທີ່ເອີ້ນວ່າ "ລັດຖະບານທີ່ມາຈາກ ການເລືອກ ຕັ້ງ" ສຳລັບບັນດາປະເທດພາກພື້ນແລະຂົງເຂດໂດຍສະເພາະ. ເພື່ອໃຫ້ ການປະກາດຂອງ ກຸງປາຣີ ໃນການຊ່ວຍເຫຼືອຮ່ວມມືຢ່າງມີປະສິດທິພາບ (2005), ຈຶ່ງໄດ້ມີຄວາມ ພະຍາຍາມທີ່ຈະເຮັດໃຫ້ແຜນການດັ່ງກ່າວຢູ່ແນວດຽວກັນກັບແຜນງານຂັ້ນ ປະເທດແລະສ້າງການເຊື່ອມຕໍ່ທີ່ໃກ້ຊິດກັບໜ່ວຍງານຕົວແທນພັດທະນາອື່ນໆໃນການ ນຳໃຊ້ ແຜນດຳເນີນງານ.

ເຖິງຈະແມ່ນຕົວແທນທຸລະກິດນ້ອຍ, ACIAR ກໍຮັບຮູ້ເຖິງຄວາມຕ້ອງການໃນການຕັ້ງໃຈ ໃສ່. ເນື້ອຫາທີ່ສຳຄັນຂອງໂຄງການທີ່ໄດ້ສະແດງໃຫ້ເຫັນໃນແຜນການນີ້ແມ່ນຜົນຈາກການປຶກສາຫາລືຢ່າງໃກ້ຊິດກັບແຕ່ລະປະເທດທີ່ພວມພັດທະນາເລື້ອງຄວາມສຳຄັນກັບການກະສິກຳ ແລະຊຶ່ງບັນດາບັນຫາ ແມ່ນຕອບສະໜອງກັບວິທີແກ້ໄຂທີ່ເໝາະສົມໂດຍຜ່ານການຄົ້ນຄ້ວາ. ນອກຈາກການປະຕິບັດພາຍໃຕ້ແຫຼ່ງງົບປະມານທີ່ຈຳກັດ, ປັດໃຈ ອື່ນໆ ດັ່ງເຊັ່ນ: ການສະເໜີລະບົບເພື່ອການຮັບເອົາຜົນຂອງ R&D , ບຸລິມະສິດ ແລະ ການມີຄວາມຊຳນິຊຳນານຂອງອອສເຕຣເລຍກໍມີຄວາມສຳຄັນ. ການຮັບເອົາວິທີທາງ ຕ່າງໆ ກໍໄດ້ຖືກກ່າວໄວ້ຢ່າງຊັດເຈນຢູ່ໃນການອອກແບບໂຄງການ ແລະ ດຽວນີ້ພາກ ສ່ວນເອກກະຊົນ ຫຼື ແອນຈີໂອ (NGO) ກໍໄດ້ພົວພັນຢ່າງຕັ້ງໜ້າກັບປະມານ 50 ກວ່າ ໂຄງການຂອງ (ACIAR).

ຜນການປະຕິບັດງານ (AOP) ປະຈຳປີ 2008–09 ສືບຕໍ່ແນວທາງໃຫ້ ACIAR ຫັນໄປຊຸກບັນດາໂຄງການໃຫຍ່ໃຫ້ຮວມກັນແທນທີ່ຈະແຍກເປັນໂຄງການອິດສະຫຼະຫຼາຍໂຄງ ການ. ໃນປີ 2008–09 ຈະມີໂຄງການໃຫຍ່ທີ່ມີມູນຄ່າ(2-5 ລ້ານໂດລາ) ຫຼາຍໂຄງການ ຈະຖືກພັດທະນາຫຼືສົ່ງເສີມນຳໃຊເຊິ່ງຕາມປົກກະຕິແລ້ວຈະຮວມເຖິງວິທີການຫຼາຍການຝຶກອົບຮົມໂດຍທີມຜູ້ຈັດການຂະໜາດນ້ອຍ. ພວກເຮົາຍັງຄວບຄຸມໂຄງການ "ມາດຕະ ຖານ" ຈຳນວນໜ້ອຍແລະໃຫ້ຢູ່ໃນແຜນຂອງພວກເຮົາໃນການສຸມໃສ່ບຸລິມະ ສິດສຳຄັນ, ຈະມີໂຄງການນ້ອຍຂະໜາດຂັ້ນຕ່ຳສຸດແມ່ນ 1 ລ້ານໂດລາ (ຫຼື 600, 000 ໂດລາ ສຳ ລັບປະເທດທີ່ຢູ່ໃນໝູ່ເກາະມະຫາສະມຸດປາຊີຟິກ). ແນວທາງຫັນໄປສູ່ການອູ້ມຊູສຳລັບໂຄງການຮ່ວມລົງທຶນກັບ AusAID ກໍຈະສືບຕໍ່ໄປ. ໃນຂົງເຂດອື່ນໆ ຕົວຢ່າງວ່າ ຂົງເຂດໄຂ້ຫວັດນົກໃນປະເທດອິນໂດເນເຊຍ ຫຼືເຂດການສະຫງວນປ່າໄມ້ ແບບຍືນຍົງຢູ່ປາປົວນິວກີນີ ແລະອິນໂດເນເຊຍນັ້ນແມ່ນເປັນສ່ວນນຶ່ງຂອງໂຄງການຄົ້ນ ຄວ້າການລົງທຶນ ຂອງ ACIAR ເພື່ອສົ່ງເສີມໂຄງການພັດທະນາຂອງ AusAID.

ການຈັດສັນແບ່ງງົບປະມານໂຄງການຂອງ ACIAR ປະຈຳປີ 2008-09 ໃຫ້ພາກພື້ນ ຕ່າງໆແມ່ນສະເໜີຕາມຂັ້ນດັ່ງຕໍ່ລົງໄປນີ້:

- ປະເທດປາປົວນິວກີນີແລະປະເທດທີ່ຢູ່ໝູ່ເກາະປາຊີຟິກ *ປະມານ* 20%
- ປະເທດແຖບເອເຊຍຕາເວັນອອກສ່ຽງໃຕ້> 45%
- ເອເຊຍໃຕ້ ປະມານ15%
- ເອເຊຍເໜືອ < 15%
- ອາຟຼິກາໃຕ້< 5%

ການສະໜັບສະໜູນຂອງພວກເຮົາຕໍ່ກຸ່ມໃຫ້ຄຳປຶກສາກ່ຽວກັບສູນການຄົ້ນຄວ້າກະສິກຳສາກົນ (CGIAR) (ສູນກາງCG) ຈະສືບຕໍ່ໃນປີ 2008-09. ເງິນທຶນແບບບໍ່ຜູກມັດຈຳນວນ 5.5 ລ້ານໂດລາ ຈະສະໜອງໃຫພ້ອມກັບໂຄງການທີ່ມີ ແນວຄິດລິເລີ້ມຕິດພັນກັບແຜນງານ. ຄວາມແຕກຕ່າງລະຫວ່າງໂຄງການຮ່ວມມືສອງຝ່າຍ ແລະ ຫຼາຍຝ່າຍຂອງ CGIAR ຂອງພວກເຮົາຈະບໍ່ເຂັ້ມແຂງໄດ້ຍ້ອນ ວ່າມີໂຄງການໃຫຍ່ກວ່າທີ່ມີແນວຄິດສະເພາະການຖືກພັດທະນາ ແລະເຊິ່ງລວມມີທັງນັກຄົ້ນຄວ້າຄົນອອສ ເຕຣເລຍ ແລະ ສູນກາງ CG.ຄ່າໃຊ້ຈ່າຍທີ່ສູນກາງ CIAR ໃຫ້ສູນກາງ CG ແມ່ນປະ ມານ 11 ລ້ານໂດລາ ໃນສົກປີ 2008-09.

## ໂຄງການບຸລິມະສິດສຳລັບບັນດາປະເທດຄູ່ຮ່ວມທີ່ສຳຄັນ ໃນປີ 2008–09

### ປາປົວນິວກີນີ

- ສົ່ງເສີມລາຍໄດ້ຂອງກຸ່ມກະເສດພືດສວນລາຍຍ່ອຍ ແລະ ປະເພດພືດທີ່ເປັນທົວ
- ປັບປຸງແກ້ໄຂຜົນກຳໄລຂອງກຸ່ມກະເສດລາຍຍ່ອຍຈາກການສົ່ງອອກໝາກໄມ້ ແລະ ເຮັດການຕະຫຼາດ
- ການດຳລົງຊີວິດແບບໃຫມ່ຈາກກຸ່ມປະມົງ, ການປູກພືດແລະລ້ຽງສັດໃຕ້ນ້ຳ ແລະ ປ່າໄມ້
- ການບໍລິຫານແບບຍືນຍົງໃຫ້ແກ່ຊັບພະຍາກອນປ່າໄມ້ແລະສັດນ້ຳ
- ຄວາມປອດໄພທາງດ້ານຊີວະພາບຂອງການກະສິກຳ
- ກ່າວເຖິງການບີບບັງຄັບຂອງສັງຄົມ, ວັດທະນະທຳແລະນະໂຍບາຍໃນການຮັບເອົາເຕັກໂນໂລຢີກະສິກຳ
- ການສ້າງຂີດຄວາມສາມາດຂອງສະຖາບັນແລະບຸກຄົນ

### ບັນດາປະເທດທີ່ຢູ່ແຖບມະຫາສະມຸດປາຊີຟິກ

(ເນັ້ນໃສ່ ເກາະຟີຈີ, ໝູ່ເກາະໂຊໂລມອນ, ວານຸອາຕູ, ຊາມົວ ແລະ ຕົງກາ)

- ປັບປຸງລາຍໄດ້ຂອງຄອບຄົວ ແລະຄວາມປອດໄພຂອງອາຫານໂດຍຜ່ານການເຮັດໃຫ້ໄດ້ຮັບຜົນຜະລິດຫຼາຍຂຶ້ນ ແລະລະບົບກະສິກຳທີ່ແຕກຕ່າງ, ລວມມີ:
  - ການຄູ້ມຄອງບໍລິຫານດ້ານພືດທີ່ເປັນທົວ,ປູກພືດສວນແລະການເພາະປູກພືດ ຕ່າງໆ ແລະການຕະຫຼາດ
  - ການຜະລິດຂອງຊາວບ້ານແລະການເພີ່ມມູນຄ່າໃຫ້ຜະລິດທະພັນປ່າໄມ້
  - ຊຸມຊົນກັບການເພາະພັນລ້ຽງສັດນ້ຳ ແລະປູກພືດທະເລ
- ການປະເມີນຜົນແລະວາງແຜນການນຳໃຊ້ການປະມົງລຽບຝັ່ງແບບຢັ້ງຢືນ

- ຄວາມປອດໄພຊີວະພາບແລະການ ຮັບປະກັນປ້ອງກັນການແຜ່ລະບາດຂອງເຊື້ອໂຣກ
- ປະຕິບັດວຽກງານກັບທັງສອງອົງກອນໃນເຂດປາຊິຟິກ

## ປະເທດອິນໂດເນເຊຍ

(ເນັ້ນໃສ່ອິນໂດເນເຊຍຕາເວັນອອກ,ເກາະຊາວາ ແລະບາງສ່ວນຂອງເກາະສຸມາຕຣາ)

- ປັບປຸງທາງເລືອກນະໂຍບາຍເພື່ອສະໜັບສະໜຸນການຄ້າໃນເຂດຊົນນະບົດ
- ການຄວບຄຸມເລື່ອງຄວາມປອດໄພຊີວະພາບ,ພືດຜົນ ແລະ ປະສຸສັດ, ສັດຕູພືດແລະ ພະຍາດອື່ນໆ.
- ພັດທະນາອຸດສາຫະກຳການປູກພືດທີ່ສາມາດແຂ່ງຂັນໄດ້
- ການພັດທະນາທຸລະກິດການກະເສດເພື່ອການເພາະປູກພືດລະບົບກະສິກຳໃຕ້ນ້ຳ ແລະ ລະບົບປະສຸສັດ (ໂດຍສະເພາະຢູ່ທາງພາກຕາເວັນອອກສ່ຽງໃຕ້ຂອງອິນໂດເນເຊຍ)
- ການຈັດການຄູ້ມຄອງແຫຼ່ງຊັບພະຍາກອນການປະມົງແບບຍັ້ງຍືນ (ແບ່ງສ່ວນສະສົມ, ການຫາປາແບບຜິດກົດຫມາຍ)ແລະ ປ່າໄມ (ການຈັດການຄູ້ມຄອງນະໂຍບາຍການປ່ຽນແປງຂອງສະພາບອາກາດໃຫ້ລົດລົງ)
- ຮ່ວມມືໃນໂຄງການຮວມອັນສຳຄັນລະຫວ່າງແຜນງານຮ່ວມລະຫວ່າງປະເທດອອສເຕຣເລຍ ແລະອິນໂດເນເຊຍ
  - ການພັດທະນາທຸລະກິດການກະເສດໃນຄົນກຸ່ມຍ່ອຍຂອງອິນໂດເນເຊຍ ຕາເວັນອອກ
  - ການປົວແປງດິນທີ່ໃຊ້ໃນກະສິກຳໃນນ້ຳແລະດິນນາໃຫ້ກັບມາສູ່ສະພາບເກົ່າຢູ່ທີ່ເຂດອາເຊ (Aceh)

## ຫວຽດນາມ

(ເນັ້ນຢູ່ຈຸດລຽບຝັ່ງພາກກາງ,ເຂດພູທາງທິດຕາເວັນຕົກສ່ຽງເຫນືອ,ສາມຫຼ່ຽມແມ່ນ້ຳຂອງ, ຊາຍຝັ່ງຕາເວັນອອກສ່ຽງເໜືອ(ເຂດປະມົງ)

- ສ້າງຄວາມໝັ້ນຄົງໃນການແຂ່ງຂັນການຕະຫຼາດດ້ານການກະສິກຳ ແລະການຫາປາໂດຍຜ່ານລະບົບຄວາມປອດໄພຊີວະພາບ ແລະລະບົບທຸລະກິດກະສິກຳ
- ການພັດທະນາອຸດສາຫະກຳກະສິກຳໃນນ້ຳ ແລະຜະລິດຕະພັນການເພາະປູກປ່າໄມ້ໃຫ້ມີຄຸນຄ່າກ່ວາເກົ່າ
- ການບໍລິຫານຊັບພະຍາກອນດິນແລະນ້ຳເພື່ອເຮັດກຳໄລແລະ ສະໜັບສະໜູນກະສິກຳທາງລຽບຝັ່ງໃຕ້ຂອງຫວຽດນາມ
- ສ້າງໂອກາດທາງດ້ານຕະຫຼາດເພື່ອບັນດາຊຸມຊົນທີ່ຢູ່ບໍລິເວນຮາບສູງໃນພາກເໜືອແລະພາກຕາເວັນຕົກສ່ຽງເໜືອ

## ຟີລິບປິນ

(ເນັ້ນໃສ່ທາງໃຕ້ຂອງຟີລິບປິນ, ທາງເໜືອແລະທາງໃຕ້ຂອງເຂດມິນດານາວ ແລະເຂດວິຊາຍາ)

- ເພີ່ມການແຂ່ງຂັນທາງດ້ານຕະຫຼາດຂອງຜົນຜະລິດດ້ານ ກະສິກຳ ໂດຍການ ເຮັດໃຫ້ເຂົ້າກັບຂໍ້ກຳນົດຂອງການຕະຫຼາດ (ເນັ້ນໃສ່ໝາກໄມ້,ຜັກຕ່າງໆແລະ ຜະລິດທະຜົນກະສິກຳທາງນ້ຳ)
- ການຈັດການກັບດິນການປູກຝັງແລະຊັບພະຍາກອນນ້ຳເພື່ອການກະສິກຳທີ່ໄດ້ ຜົນປະໂຫຍດແລະໝັ້ນຄົງ
- ເບິ່ງເລື້ອງຂໍ້ຈຳກັດຂອງກົດລະບຽບ, ນະໂຍບາຍ,ເຕັກນິກ ແລະສັງຄົມທັນມານຳໃຊ້ຜົນທີ່ໄດ້ຮັບຈາກການຄົ້ນຄ້ວາ

## ກຳປູເຈຍ

- ຄວາມປອດໄພໃນລະບົບຜົນຜະລິດຂອງການປູກເຂົ້າ,ກະເສດສາດ,ການຈັດ ການປາບສັດຕູພືດ ແລະດ້ານຜົນຜະລິດອື່ນໆ
- ຄວາມຫຼາກຫຼາຍຂອງກະສິກຳທີ່ຫຼາຍຂຶ້ນ (ໂດຍສະເພາະແມ່ນຜັກແລະສັດລ້ຽງຕ່າງໆ) ເພື່ອສ້າງລາຍໄດ້ແລະສົ່ງເສີມສິນຄ້າໂພສະນາການ ແລະ ການຕະຫຼາດ
- ສ້າງຂີດຄວາມສາມາດຂອງສະຖາບັນແລະບຸກຄົນ

## ສ.ປ.ປ ລາວ

- ການແນະນຳທາງເລືອກຂອງການປ່ຽນຈາກການເຮັດໄຮ່ລອຍຢູ່ບ່ອນເຂດເນີນ ສູງ,ໂດຍສະເພາະໃຫ້ຫັນໄປເຮັດການລ້ຽງສັດແລະປ່າໄມ້
- ສົ່ງເສີມກະສິກຳທີ່ຫຼາກຫຼາຍຊະນິດເພື່ອປັບປຸງອັດຕາການຜະລິດ,ໂດຍສະເພາະ ແມ່ນລະບົບກະສິກຳເຂດທົ່ງຮາບແລະເຂດແຄມແມ່ນ້ຳແມ່ນໃຫ້ປູກເຂົ້າແລະ ເຮັດສະລ້ຽງປາ
- ສ້າງຂີດຄວາມສາມາດຂອງສະຖາບັນແລະບຸກຄົນ

## ຕີມໍຕາເວັນອອກ

- ການປະເມີນຕີລາຄາແລະວາງຈຳໜ່າຍຜົນຜະລິດອອກໃໝ່ຫຼາຍຊະນິດເພື່ອປັບປຸງຄວາມປອດໄພທາງດ້ານອາຫານແລະໂພສະນາການ
- ສ້າງຂີດຄວາມສາມາດຂອງນັກຄົ້ນຄວ້າພາຍໃນມະຫາວິທະຍາໄລແລະກະຊວງກະສິກຳ

## ອິນເດຍ

(ເນັ້ນໃສ່ການເຮັດວຽກຮ່ວມກັນລະຫວ່າງນະໂຍບາຍຕ່າງໆແລະເຕັກໂນໂລຢີຊີວະພາບ ກັບອົງກອນກາງ,ການຈັດການນ້ຳໃນພາກກາງທົ່ງພຽງ/ອັນທຣາປຣາເດັສ)

- ການນຳໃຊ້ ການເລືອກ ຂອງ DNA ການຊ່ວຍຜູ້ຜະລິດເພື່ອເປັນເຄື່ອງມືໃນການຜະສົມພັນຂອງເຂົ້າວັດ
- ການຄວບຄຸມນ້ຳເພື່ອການກະສິກຳເພື່ອຍົກລະດັບຊີວິດປະຈຳວັນໃນຂົງເຂດທີ່ ຝົນຕົກຫຼາຍໃຫ້ດີຂື້ນ
- ການຄົນຄ້ວານະໂຍບາຍເພື່ອເປັນທາງເລືອກໃນການປະຕິຮູບການຄ້າແລະການຕະຫຼາດເພື່ອສຸມໃສ່ທຸລະກິດກະສິກຳ

## ປາກິສະຖານ

- ໂຄງການການເຊື່ອມຕໍ່ພາກສ່ວນກະສິກຳ
  - ການພັດທະນາຜົນຜະລິດ ແລະ ລະບົບການຕະຫຼາດຫມາກມ່ວງແລະພືດຕະກູນສົ້ມໃຫ້ມີປະສິດທິພາບ ພ້ອມສາມາດແຂ່ງຂັນໄດ້
  - ການປັບປຸງການດຳລົງຊີວິດຂອງພວກເຈົ້າຂອງຟາມຣີດນ້ຳນົມ
- ການບໍລິຫານດິນແລະຊົນລະປະທານໃຫ້ດີກວ່າເກົ່າເພື່ອຜົນປະໂຫຍດທາງການ ຄ້າດ້ານກະສິກຳ

## ບັງກະລາເທດ

- ການຮັບເອົາທາງເລືອກຂອງພືດຜົນລະດູຫນາວເພື່ອໃຫ້ແຂງແກ່ງຂຶ້ນແລະລະບົບການປູກເຂົ້າທີ່ແຕກຕ່າງກັນ

## ຈີນ

(ເນັ້ນໃສ່ແຂວງທີ່ຢູ່ທາງພາກຕາເວັນຕົກສ່ຽງເໜືອ ແລະເຂດປົກຄອງຕົນເອງຕີເບດ)

- ຜົນຜະລິດກະສິກຳເພີ້ມຂຶ້ນຈາກລະບົບຜົນລະປູກທີ່ມີຝົນຕົກໃນເຂດຕາເວັນຕົກສ່ຽງເໜືອຂອງຈີນ, ເນັ້ນເຖິງເທັກນິກແລະນະໂຍບາຍການແຊກແຊງເພື່ອການຈັດການແຫຼ່ງຊັບພະຍາກອນທຳມະຊາດທີ່ດີຂຶ້ນ
- ປັບປຸງຄວາມສາມາດໃນການຜະລິດຂອງພືດຜົນ,ການລ້ຽງສັດໃນເຂດປົກຄອງ ຕົນເອງຕີເບດ
- ນະໂຍບາຍຄົ້ນຄວ້າເລື້ອງສິ່ງທີ່ພົວພັນກັບການພັດທະນາການຄ້າຈີນເພື່ອກຸ່ມກະເສດລາຍຍ່ອຍ

# ສ.ປ.ປ.ລາວ

| | |
|---|---|
| ຜະລິດທະພັນລວມໃນປະເທດຕໍ່ຄົນ (ຄຳນວນລາຍໄດ້ຕໍ່ຄົນເປັນເງິນໂດລາສະຫະລັດ) | 2,039 |
| ປະຊະກອນ(ລ້ານ) | 6 |
| ປະຊາກອນທີ່ຄາດວ່າຈະເພີ້ມ(ລ້ານ) ໃນປີ 2015 | 7 |
| ໂຄງການຮ່ວມມືສອງຝ່າຍທີ່ມີຜົນຮ່ວມກັນ | 14 |
| ໂຄງການຮ່ວມມືຫຼາຍຝ່າຍ ທີ່ມີຜົນຮ່ວມກັນ | 1 |

| | |
|---|---|
| ໂຄງການປະຕິບັດແຜນຕົວຈິງຮ່ວມມືສອງຝ່າຍປະຈຳປີ 2006–07 | $1.1 m |
| ການປະເມີນຜົນໂຄງການຮ່ວມມືສອງຝ່າຍປະຈຳປີ 2007–08 | $1.1 m |
| ງົບປະມານຂອງໂຄງການຮ່ວມມືສອງຝ່າຍປະຈຳປີ 2008–09 | $1.1 m |
| ງົບປະມານຂອງໂຄງການຮ່ວມມືສອງຝ່າຍ ແລະ ຫຼາຍຝ່າຍປະຈຳປີ 2008–09 | $1.1 m |

[a] *ຂີດຄວາມສາມາດທາງດ້ານລາຄາທີ່ມີຄວາມສະເໝີພາບ ໃນການຊື້ (ເບິ່ງຜະນວກ3, ການຄັດເລືອກໂຕຊີ້ບອກການພັດທະນາຂອງໂລກ)*

## ຜູ້ອຳນວຍການຫຼັກຂອງແຜນງານ

*ດຣ. ຄາໂຣລີນ ລີເມີລີ, ອົງການບໍລິຫານລະບົບກະສິກຳ*
*ດຣ. ດັກເກຣ, ອົງການສຸຂະພາບຂອງສັດ*
*ດຣ. ພອລ ຟອັກສ, ອົງການການປັບປຸງ ແລະ ຄວບຄຸມພືດຜົນ*
*ທ່ານ. ບານີ ສະມິດ, ອົງການການປະມົງ*
*ດຣ. ຣັສໂຊລ ເຣນສ, ອົງການປ່າໄມ້*

## ຜູ້ບໍລິຫານໃນປະເທດ

*ທ່ານນາງ ຈິຣາພອນ ສັນປະກິດ ACIAR ຜູ້ຈັດການລະດັບເຂດຢູ່ ກຳປູເຈຍ, ສ.ປ.ປ. ລາວ,ໄທ ແລະ ພະມ້າ*



*ແມ່ຍິງໄດ້ແນະນຳໃຫ້ໃຊ້ອາຫານສັດເພື່ອເປັນອາຫານເສີມທີ່ໃຊ້ລ້ຽງໃນຄອກໝູໃນໝູ່ບ້ານ*

## ກົນລະຍຸດຂັ້ນກາງ

ໂຄງການຊ່ວຍເຫຼືອຂອງ ACIAR ສະໜັບສະໜູນການຄົ້ນຄວ້າທີ່ຊ່ວຍຈຸດປະສົງຂອງ ລັດຖະບານ ສ.ປ.ປ. ລາວ ເພື່ອ:

- ບອກລັກສະນະຈຳເພາະແລະປະຕິບັດຕໍ່ທາງເລືອກໃນການເຮັດໄຮ່ໃນພື້ນທີ່ເນີນ ສູງ, ໂດຍການໄດ້ຮັບການຊຸກຍູ້ຈາກ ACIAR ໃນການສອດແຊກນຳໃຊ້ເທັກນິກເພື່ອປັບປຸງເພີ້ມຜົນກຳໄລຕໍ່ລະບົບການປູກຝັງຂອງຄອບຄົວທີ່ຍັງມີການຜະລິດອອກເປັນສິນຄ້າຍັງຕ່ຳເປັນທາງເລືອກແທນ.
- ການກະສິກຳທີ່ຫຼາກຫຼາຍເພື່ອເພີ່ມຄວາມສາມາດແກ່ການຜະລິດໃນບໍລິເວນພື້ນທີ່ຮາບພຽງຕ່ຳ, ດ້ວຍການຊຸກຍູ້ການນຳໃຊ້ການຄົ້ນຄວ້າທີ່ແນໃສ່ການເພີ່ມຄວາມສາມາດໃນການຜະລິດຢູ່ເຂດມີຊົນລະປະທານແລະມີຝົນເຊິ່ງເປັນລະບົບທີ່ເຮັດກະສິກຳໂດຍມີການປູກເຂົ້າ ແລະຍັງໄດ້ກະຈາຍໄປຫາພືດຜົນອື່ນໆ.

ຍັງມີການເນັ້ນຄວາມສຳຄັນໃນການຊ່ວຍໃຫ້ການພັດທະນາຄວາມສາມາດເພື່ອການຄົ້ນ ຄວ້າແລະການຜັນຂະຫຍາຍຢ່າງເປັນລະບົບ. ຖ້າເຫມາະສົມ, ໂຄງການແຊກ ຊ້ອນກໍຈະ ຖືກດັດແປງເພື່ອຊ່ວຍສົ່ງເສີມແຜນງານຜູ້ອຸປະຖຳທີ່ພົວພັນການປັບປຸງການຜະລິດເຂົ້າ, ປ່າໄມ້ ແລະສຸຂະພາບຂອງສັດ ແລະການຜະລິດ.

## ໂຕຊີ້ບອກການປະຕິບັດງານສຳຄັນ ( 2008-09)

- ບັນດາຜູ້ໄດ້ຮັບທຶນການຄົ້ນຄ້ວາກ່ຽວກັບການກະສິກຳລາວ (LARF) (ລະບົບໂຄງການຂະໜາດນ້ອຍ) ໄດ້ໃຊ້ປະສົບການຈາກ LARF ເປັນການກ້າວ ເຂົ້າສູ່ການຮ່ວມມືຂັ້ນປະເທດຫຼືຜູ້ສະຫນັບສະຫນູນໂຄງການ
- ຂໍ້ມູນເບື້ອງຕົ້ນໃນການເຄື່ອນໄຫວການລ້ຽງສັດແລະຜົນກະທົບທີ່ອາດມີພະຍາດ ໂລກລະບາດຂ້າມພົມແດນຂອງສັດໄດ້ຖືກເກັບກຳແລະສະເໜີແກ່ຜູ້ສ້າງນະໂຍບາຍ
- ການຮັບເອົາທາງເລືອກໃນການໃຫ້ອາຫານງົວ ຄວາຍ ແລະໝູແບບໃໝ່ຂອງ ACIAR ຢູ່ໃນຂັ້ນບັນດາກະເສດຕະກອນນັ້ນມີຫຼາຍຢ່າງໜ້ອຍຢູ່ໃນສອງແຂວງ ທາງພາກເໜືອຂອງ ສ.ປ.ປ. ລາວ
- ການຮວມຕົວຂອງໂຄງການກ່ຽວກັບແມ່ນ້ຳແລະການປະມົງຂອງ ACIAR ກັບບັນດາ ໂຄງການຂອງລັດຖະບານ ແລະຄະນະກຳມະການອົງການແມ່ນ້ຳຂອງໃນພາກພື້ນ

## ສະຖານະພາບທາງສັງຄົມ

ຂໍ້ແຕກຕ່າງທີ່ສຳຄັນຂອງປະເທດທີ່ບໍ່ມີທາງອອກສູ່ທະເລນີ້ແມ່ນຄວາມໜາແໜ້ນຂອງ ປະຊາກອນຍັງຕ່ຳ, ມີຫຼາຍຊົນເຜົ່າ,ໂຄງສ້າງພື້ນຖານແມ່ນຍັງບໍ່ດີພໍຕາມການແຜ່ກະຈາຍຂອງຄົນຕາມພູມສັນຖານ. ປະຊາ ຊົນສ່ວນໃຫຍ່ແມ່ນເຮັດວຽກດ້ານກະສິກຳ ກວ່າ 80% ຂອງປະຊາກອນທັງຫມົດ ແລະປະກອບເປັນ 53% ຂອງຜະລິດຕະພັນໃນປະເທດ, ແຕ່ ຢ່າງໜ້ອຍປະມານ 1 ສ່ວນ 3 ຂອງປະຊາກອນຢູ່ຕ່ຳກວ່າມາດຕະຖານ ທັງມີຄວາມທຸກຍາກ. ຕັ້ງແຕ່ປີ 1999 ມາ ເສດຖະກິດກໍໄດ້ຟື້ນໂຕຂຶ້ນພໍ ສົມຄວນ ໂດຍຈຸດສຳຄັນແມ່ນ ຈາກການສົ່ງອອກເຄື່ອງນຸ່ງຫົ່ມ, ໄມ້ທ່ອນແລະຜະລິດຕະພັນທີ່ເຮັດດ້ວຍໄມ້,ສົ່ງຄຳ ອອກ ຄືນອີກ,ຈຳຫນ່າຍໄຟຟ້າພະລັງນ້ຳ ແລະກາເຟ.ເຖິງແມ່ນວ່າມີການກຸ້ມຕົນເອງທົ່ວປະ ເທດກໍຕາມ, ກໍຍັງມີຄວາມຂາດແຄນໃນດ້ານເຂົ້າ ແລະອາຫານຕາມລະດູເປັນປະຈຳຢູ່ໃນຫຼາຍແຂວງ ແລະເມືອງ. ການຮັບປະກັນທາງດ້ານອາຫານຍັງເປັນສິ່ງທີ່ສຳຄັນໃຫ້ກັບການພັດທະນາອຸດສາຫະກຳໃນລາວ.

ການປູກເຂົ້າທີ່ໃຊ້ນ້ຳຝົນໃນລາວ ແມ່ນຖືກກະທົບໂດຍຄວາມຜັນແປປ່ຽນແປງຂອງອາ ກາດໃນໄລຍະຍາວ. ການໄຫຼຂອງແມ່ນ້ຳຂອງແລະ ສາຍນ້ຳຕ່າງໆກໍ່ຈະຖືກກະທົບໂດຍການປ່ຽນແປງຂອງອາກາດ ແລະ ຈາກແຜນການກໍ່ສ້າງເຂື່ອນນຳ. ໄດ້ມີການຄາດການວ່າລາວຈະເປັນ 1 ໃນ 4 ຂອງປະເທດຮ່ວມ ທີ່ມີສ່ວນກ່ຽວຂ້ອງໃນຮັບເອົາແນວຄິດໃໝ່ ໃນ ການປ່ຽນແປງຂອງສະພາບອາກາດ ຂອງ ACIAR ທີ່ໄດ້ຖືກອອກແບບເພື່ອການນຳປະຕິບັດໃນຊ່ວງປີ 2008–09.

ໃນຂະນະທີ່ເສດຖະກິດຂອງໄທກຳລັງພັດທະນາ, ລາວແມ່ນເລີ່ມທີ່ຈະສ້າງໂອກາດໃຫ້ຕົນເອງໃນການເປັນຜູ້ຊ່ຽວຊານໃນການຜະລິດສິນຄ້າກະສິກຳທີ່ໄທຕ້ອງການ ແລະການໃຊ້ຄວາມໄດ້ປຽບຫຼາຍກວ່າໃນການມີຄ່າແຮງງານຖືກໃນລາວ.

ເມື່ອໄວໆນີ້ ລາວມີແນວໂນ້ມໃນການພັດທະນາເສດຖະກິດອຸດສາຫະກຳ 2 ດ້ານ, ບໍລິເວນພື້ນທີ່ຮາບຕໍ່າຕາມລຽບແມ່ນ້ຳຂອງທີ່ມີຕະຫຼາດຫຼັກຄືປະເທດໄທ, ຊຶ່ງໄດ້ກະຕຸ້ນການພັດທະນາກະສິກຳ,ແລະໃນບໍລິເວນພື້ນທີ່ເນີນສູງທີ່ຊາວນາຫຼາຍຄົນຍັງໃຊ້ວິທີ "ຖາງປ່າ ແລະ ຈູດ" ມາເປັນການປູກຝັງ. ລັດຖະບານ ສ.ປ.ປ. ລາວ ແມ່ນກຳລັງຂະຫຍາຍຊົນລະປະທານໃນເຂດພື້ນທີ່ຮາບຕໍ່າ ແລະກຳລັງຫາແນວທາງອື່ນມາທົດແທນການປູກຝັງແບບ ຖາງປ່າ ແລະຈູດ ໃນພື້ນທີ່ເນີນສູງ. ດ້ວຍການມີຄວາມກົດດັນຫຼາຍຂຶ້ນຈາກປະຊາຊົນທີ່ ຢູ່ເຂດເນີນສູງ, ໄລຍະຂອງການບໍ່ໄດ້ເພາະປູກແມ່ນສັ້ນ. ຢູ່ໃນພື້ນທີ່ເຂດທັງເນີນສູງແລະ ຮາບພຽງຕໍ່າ, ຄວາມຫຼາກຫຼາຍຂອງສິນຄ້າ ແລະມີການລວມຕົວຂອງລະບົບກະສິກຳກັບລະດັບຄວາມສຳຄັນທາງຕະຫຼາດທີ່ຍັງເປັນສິ່ງສຳຄັນກ່ອນອື່ນໃດຢູ່. ເຖິງຢ່າງໃດກໍ່ຕາມ, ໃນດ້ານຂອງການປຽບທຽບທີ່ໄດ້ປຽບ, ໂອກາດທາງດ້ານຕະຫຼາດ ແລະຄວາມຕ້ອງການ ໃນການຄົ້ນຄວ້າ, ເສດຖະກິດຂອງ 2 ດ້ານນີ້ຍັງແຕກຕ່າງກັນ.

ກະສິກຳຢູ່ໃນພື້ນທີ່ເຂດຮາບພຽງຕໍ່າແມ່ນເຂດທີ່ດີໃນການປູກເຂົ້າ, ປະ ມານ 2.3 ລ້ານໂຕນຖືກຜະລິດ, ສົມທຽບກັບຫມາກສາລີເຊິ່ງປູກໄດ້ 120,000 ໂຕນ, ມັນດ້າງຜະລິດໄດ້ 150,000 ໂຕນແລະ ປູກພວກພືດຜັກຕະກູນຖົ່ວໄດ້ຫນ້ອຍ. ສານໂປຼຕີນຂອງປາແມ່ນປະມານ 40%

ລະບົບໃນພື້ນທີ່ເນີນສູງແມ່ນຕ່າງຈາກພື້ນທີ່ຮາບພຽງຕໍ່າຫຼາຍ ແຕ່ວ່າ ເຂົ້າຫາຕະຫຼາດໄດ້ຍາກ ເພາະວ່າການຜະລິດເຂົ້າແມ່ນເພື່ອການບໍລິໂພກ ພາຍໃນຄອບຄົວເປັນສ່ວນໃຫຍ່. ມີບາງວິທີທີ່ງາຍດາຍທີ່ສາມາດຫລຸດການຖາງປ່າເຮັດໄຮ່ ແລະຈູດ ຢູ່ໃນເຂດນີ້. ຕົວຢ່າງ ຮວມເຖິງການສະເໜີລະບົບການເກັບກ່ຽວໄປເປັນອາຫານຂອງປະສຸສັດ,ແລະ ການລ້ຽງ ສັດເພື່ອຫາລາຍໄດ້, ປ່າໄມ້ ແລະການປູກໄມ້. ໃນຊຸມປີ 1990 ປ່າໄມ້ໄດ້ສ ໜອງ 1 ສ່ວນ 3 ຂອງລາຍໄດ້ຈາກການສົ່ງອອກ, ແຕ່ຫຼັງຈາກນັ້ນມາ ລັດຖະບານໄດ້ປ່ຽນມາຈຳ ກັດການຕັດໄມ້ທຳມະຊາດ ຈຶ່ງເປັນການເຮັດໃຫ້ລາຍໄດ້ລົດລົງ. ລາວຍັງເປັນປະເທດທີ່ມີປ່າໄມ້ຫຼາຍໃນມາດຕາຖານຂອງເອເຊຍ, ແລະການຮັກສາຊັບພະຍາກອນທຳມະຊາດອັນນີ້ໃນໄລຍະຍາວແມ່ນສຳຄັນທີ່ສຸດ. ຫຼາຍກວ່າປະເທດອື່ນໆໃນເອເຊຍ,ການເກັບກ່ຽວ ຜົນຜະລິດທີ່ບໍ່ແມ່ນການຕັດໄມ້ເພື່ອເປັນອາຫານ, ໄຍອາຫານ ແລະ ຢາປະກອບເປັນລາຍໄດ້ທີ່ສຳຄັນຂອງຊີວິດປະຈຳວັນຂອງປະຊາຊົນໃນເຂດຊົນນະບົດໃນປະເທດລາວ.

ຜູ້ລ້ຽງສັດລາຍຍ່ອຍແມ່ນມີຄວາມສຳຄັນຫຼາຍໃນເສດຖະກິດຂອງລາວ, ສະໜອງລາຍໄດ້ສະເລ່ຍແມ່ນກາຍເຄິ່ງໃຫ້ຄອບຄົວ.ການຄົ້ນຄວ້າຂອງ ACIAR ຈະຊ່ວຍໃນການຄວບຄຸມພະຍາດຕິດຕໍ່ຕ່າງໆຂ້າມປະເທດ ແລະພາຍໃນປະເທດ (ພະຍາດແຜ່ຂ້າມເຂດ) ໂດຍຮ່ວມມືກັບແນວຄິດຄວບຄຸມພະຍາດ ເຊັ່ນ ໂຄງການຄວບຄຸມພະຍາດປາກເປື່ອຍ ແລະລົງເລັບ ທີ່ເກີດກັບງົວ ຄວາຍ ຂອງອົງການ ໂອໄອອີຕາເວັນອອກສ່ຽງໃຕ້ (OIE South East Asian). ບໍລິມະສິດສຳຄັນຈະແມ່ນການປັບປຸງການປະເມີນຄວາມສ່ຽງ ຂອງການຕິດຕໍ່ຂອງເຊື້ອໂຣກທີ່ເກີດຂຶ້ນໃນຕອນເຮັດການຄ້າແລະການເຄື່ອນຍ້າຍສັດ ລ້ຽງ, ການປັບປຸງລະບົບຄວບຄຸມເຊື້ອໂຣກ,ແລະລະບົບທີ່ທັນສະໄໝໃນການຄວບຄຸມ ພະຍາດ. ບັນດາໂຄງການອາດຈະຮ່ວມມືກັບປະເທດເພື່ອນບ້ານທີ່ກ່ຽວຂ້ອງໃນການຊື້ຂາຍ. ມີຊ່ວງໂອກາດຫຼາຍຢ່າງໃນການປັບປຸງການຄ້ານ້ອຍໆ ແບບຢູ່ໃນໝູ່ບ້ານໃຫ້ດີຂຶ້ນ ໂດຍການຈຳກັດຂອບເຂດຂອງຂໍ້ຈຳກັດເຊິ່ງນຶ່ງໃນນັ້ນ ແມ່ນພະຍາດຕ່າງໆ

ຈຸດສຳຄັນຂອງວຽກທີ່ຜ່ານມາຂອງ ACIAR ແມ່ນເນັ້ນໜັກໃສ່ການຈັດຕັ້ງຫ້ອງທົດລອງພະຍາດສັດທີ່ໄດ້ມີຂຶ້ນຢູ່ໃນວຽງຈັນເພື່ອໃຫ້ບໍລິການແກ່ປະເທດລາວ.ຄວາມສຳເລັດ ອື່ນໆລວມມີການແນະນຳການເລືອກຊະນິດເຂົ້າໃນລະດູຫນາວແລະທົນຕໍ່ລະດູແລ້ງ, ຈຳແນກສັດປະເພດຫນູທີ່ໄປທຳລາຍເຂົ້ານາ, ສ້າງຄວາມສາມາດໃນການຄົ້ນຄວ້າການປູກປ່າ ແລະຂະຫຍາຍວິທີກະສິກຳ, ການຈັດການຂອງປ່າທຳມະຊາດ ແລະ ການຈັດຫາການຝຶກອົບຮົມ, ລວມເຖິງການວິເຄາະຂໍ້ມູນວິທະຍາສາດ ແລະການ ຂຽນເປັນພາສາອັງກິດ. ໃນປີ 2006 ໄດ້ມີການຮ່ວມມືກັບສະຖາບັນຄົ້ນ ຄວ້າວິດທະຍາສາດເຕັກນິກກະສິກຳປ່າໄມ້, ACIAR ໄດ້ໃຊ້ລະບົບທຶນນ້ອຍເພື່ອຊ່ອຍໃຫ້ນັກຄົ້ນຄວ້າລາວໄດ້ພັດ ທະນາທັກສະໃນການອອກແບບແລະບໍລິຫານໂຄງການ ການຄົ້ນຄວ້າກະສິກຳ.

## ບຸລິມະສິດຂອງການຄົ້ນຄວ້າ

ບຸລິມະສິດແມ່ນຖືກກຳນົດໂດຍຜ່ານການເຈລະຈາການພົວພັນແລະການຢ້ຽມຢາມລະ ຫວ່າງນັກວິດທະຍາສາດ ແລະ ຜູ້ຈັດການຂັ້ນສູງດ້ານການຄົ້ນຄວ້າຈາກ ສ.ປ.ປ. ລາວ, ACIAR ແລະ ສະຖາບັນຕ່າງໆຂອງ ອອສເຕຣເລຍ. ພວກເຮົາຈະສືບຕໍ່ຊຸກຍູ້ການເຊື່ອມຕໍ່ກັບຜູ້ໃຫ້ເງິນທຶນອື່ນໆ ແລະແນໃສ່ການຂະຫຍາຍຜົນກະທົບຂອງໂຄງການທີ່ໄດ້ທຶນ ຈາກ ACIAR ໃນເຂດພາກພື້ນ. ເພີ້ມຕື່ມຈາກນີ້ ACIAR ຈະສືບຕໍ່ຊອກຫາໂອກາດ ເພື່ອເຊື່ອມຕໍ່ ຜູ້ຮ່ວມມື ໄທ R&D ເຂົ້າຫາໂຄງການ ACIAR ຢູ່ ລາວ.
ບຸລິມະສິດພາຍ ໃຕ້ສອງລະບົບຮວມມີ:

### ແຜນງານຍ່ອຍ 1: ທາງເລືອກໃນການປ່ຽນຈາກການເຮັດໄຮ່ໃນພື້ນທີ່ສູງໄຮ່ໃນພື້ນທີ່ສູງ

- ປັບປຸງຜົນກະທົບທີ່ເກີດຂຶ້ນກ່ອນໂຄງການຂອງ ACIAR ໃນ ການລົງທຶນກັບການຜະລິດການລ້ຽງສັດ ແລະ ສຸຂະພາບ ໃນລະດັບຂອງຊາວກະສິກ
- ຈັດຕັ້ງການປູກໄມ້ທີ່ຍືນຍົງ ລວມກັບການບໍລິຫານທີ່ດີຂຶ້ນໃນເລື່ອງການປູກແລະ ຮັກສາໄມ້ທ່ອນ ແລະພັນປ່າໄມ້ທີ່ບໍ່ແມ່ນໄມ້ທ່ອນ ແລະຜ່ານການເພີ້ມມູນຄ່າ

### ແຜນງານຍ່ອຍ 2: ຄວາມຫຼາກຫຼາຍຂອງກະສິກຳເພື່ອເພີ່ມການຜະລິດໃນເຂດລະບົບກະສິກຳໃນດິນຮາບພຽງຕໍ່າ

- ເພີ່ມການຜະລິດຈາກການປະມົງແລະການເພາະພັນລ້ຽງສັດນ້ຳ
- ການວິເຄາະການໃຊ້ວັກຊີນ ແລະຄວາມສາມາດໃນການໃຫ້ວັກຊີນທີ່ມີຄຸນນະພາບ ເພື່ອໃຊ້ສັກແກ້ພະຍາດໄຂ້ ແລະພະຍາດ ອື່ນໆໃຫ້ງົວຄວາຍ,ຫມູແລະສັດປີກ
- ສົ່ງເສີມນະໂຍບາຍແລະກົດລະບຽບຕ່າງໆຂອງສິ່ງແວດລ້ອມໃນພື້ນທີ່ຄວບຄຸມພະຍາດ

## ໜ້າທີ່ໃນການຈັດການໂຄງການໃນປະຈຸບັນ

*(ແຜນການທີ່ອາດເລີ້ມຕົ້ນໃຫມ່ໃນປີ 2008-09 ທີ່ສະແດງເປັນ "ການສະເຫນີ")*

4 ກຸ່ມໂຄງການທີ່ເຫມາະສົມກັບ 2 ແຜນງານຍ່ອຍ

### ແຜນງານຍ່ອຍ 1: ທາງເລືອກໃນການຫັນປ່ຽນຈາກການເຮັດໄຮ່ໃນເຂດພື້ນທີ່ເນີນສູງ ໄປສູ່ການປັບປຸງສຸຂະພາບແລະການຜະລິດໝູ ງົວ ແລະຄວາຍບ້ານ

ການສູນເສຍສັດລ້ຽງເກີດຈາກພະຍາດ ແມ່ນມີຜົນກະທົບຫຼາຍຕໍ່ລາຍໄດ້ຂອງຊາວບ້ານ ໃນເຂດພື້ນທີ່ເນີນສູງຂອງລາວ. ການແຜ່ຜາຍອັນໄວຂອງພະຍາດເຮັດໃຫ້ລາວມີຖານະເປັນບ່ອນຫຼັກຂອງການແຜ່ເຊື້ອຂອງສັດ.

ດັ່ງນັ້ນ ກຸ່ມຂອງໂຄງການນີ້ຈະປະເມີນຄວາມສ່ຽງໃນການເຄື່ອນຍ້າຍສັດ ຊຶ່ງຈະເປັນການແຜ່ພະຍາດ (AH/2006/025), ປັບປຸງການ ກວດພະຍາດ ແລະ ການຄວບຄຸມການແຜ່ຜາຍໄວຂອງພະຍາດໄວຣັສເຊັ່ນ ໂຣກປາກ ເປື່ອຍລົງເລັບ,ແລະເຊື້ອໄຂ້ຕ່າງໆ (AH/2003/001), ປັບປຸງ ການໃຫ້ໄດ້ວັກ ຊີນສັດ (AH/2005/084) ແລະ ເຂົ້າໃຈຜົນກະທົບຕໍ່ຊີວິດຂອງມະນຸດ (AH/2006/161). ລະບົບ ຜະລິດທີ່ໄດ້ຖືກປັບປຸງແລ້ວ ພວມຖືກພັດທະນາເ ພື່ອເພີ້ມລາຍໄດ້ຂອງປະຊາຊົນໂດຍການປັບປຸງອັດຕາການມີຊີວິດແລະ ການຂະຫຍາຍຂອງໝູ (AH/2004/046) ແລະງົວຄວາຍ(AH/2006/161), ການສຶກສາຕ່າງໆຮວມເຖິງການປະເມີນຜົນຮັບເອົາເຕັກໂນໂລຢີໃໝ່ (ASEM/2005/124). ບັນຫາເລື່ອງນະໂຍ ບາຍ, ການກວດພະຍາດ ແລະວັກ ຊີນແມ່ນ ຈຳເປັນຕ້ອງໄດ້ປຶກສາກັນ ຢູ່ສູນກາງ(ຢູ່ວຽງຈັນ),ໃນຂະນະທີ່ການ ເນັ້ນວຽກງານພາກສະໜາມມີຢູ່ 6 ແຂວງທາງພາກເໜືອ

| | |
|---|---|
| ASEM/2005/14 | ຂະຫຍາຍວິທີການຄັດຜົນຜະລິດສັດລ້ຽງໃນທາງພາກ ເໜືອຂອງລາວ |
| AH/2003/001 | ການຈັດການ ຊີເອັສເອັຟ (CSF) ແລະ ເອັຟເອັມດີ (FMD) ໃນ ຂັ້ນບ້ານ ຢູ່ ສ.ປ.ປ. ລາວ |
| AH/2004/046 (ຫຼາຍຝ່າຍ) | ການໃຊ້ຜັກເປັນອາຫານເສີມໃນການລ້ຽງໝູໃນ ສປປ ລາວ (CIAT) |
| AH/2005/084 (ໄດ້ຖືກສະເໜີ) | ວິທີຄວບຄຸມພະຍາດໝູໃນລັກສະນະຂັ້ນບ້ານໂດຍ ເນັ້ນໜັກໃສ່ CSF ໃນ ສປປ ລາວ |
| AH/2006/025 | ການເຂົ້າໃຈການເຄື່ອນຍ້າຍຂອງສັດລ້ຽງ ແລະຄວາມສ່ຽງຂອງ ການແຜ່ຂ້າມເຂດຂອງພະຍາດສັດ |
| AH/2006/159 (ໄດ້ຖືກສະເໜີ) | ປະຕິບັດການທີ່ດີທີ່ສຸດຂອງສຸຂະພາບແລະການເຮັດການ ກະເສດຕະ ຫຼອດຮອດ ການລ້ຽງງົວ ຄວາຍ ໃນ ສປປ ລາວ |
| AH/2006/161 | ການຄວບຄຸມໝູທີ່ມີໂລກຕິດຕໍ່ໄປຫາຄົນໄດ້. |

### ລາຍໄດ້ຈາກເຄື່ອງປ່າຂອງດົງ ແລະ ການປູກປ່າ

ສິນຄ້າໄມ້ສ້າງລາຍໄດ້ປະມານ 40% ຂອງລາຍໄດ້ໃນຄອບຄົວທັງໝົດ ໃນຊົນນະບົດ ທົ່ວ ສ.ປ.ປ. ລາວ. ລັດຖະບານກຳລັງສົ່ງເສີມໃຫ້ປູກໄມ້ມີຄ່າ ຕົວຢ່າງຕົ້ນໄມ້ສັກພ້ອມກັບຕົ້ນຍູຄາລິບຕັດ ເຊິ່ງສາມາດເພີ່ມການປົກຄຸມປ່າ ແລະ ເພີ່ມລາຍໄດ້ໃຫ້ຊາວບ້ານ. ໂຄງການນີ້ມີຈຸດມຸ່ງຫມາຍ 2 ຢ່າງ. ຈຸດມຸ່ງໝາຍທີ 1 ແມ່ນປັບປຸງການຄູ້ມຄອງປ່າໄມ້ແລະໃຊ້ລະບົບການຮັກສາ ປ່າໄມ້ປະສົມປະສານໄມ້ສັກກັບຜົນຜະລິດທີ່ບໍ່ແມ່ນພັນໄມ້ ເຮັດໃຫ້ການ ຮັກສາປ່າໄມ້ເພີ່ມຂຶ້ນເຊິ່ງໃຫ້ຜົນໃນການເພີ້ມລາຍໄດ້ໃນ ຊົນນະບົດຢ່າງ ເຫັນໄດ້ຈະແຈ້ງ ແລະ ທັງຍັງເປັນການປົກປ້ອງດິນດີຂຶ້ນ.ຈຸດມຸ່ງໝາຍທີສອງ ແມ່ນຂະ ຫຍາຍ ຂະບວນການໄມ້ລາວແລະ ການຜະລິດເປັນສິນຄ້າທີ່ ມີມູນຄ່າເພີ້ມ ແລະ ກາຍ ເປັນ ລາຍໄດ້ທ້ອງຖິ່ນ.

| | |
|---|---|
| FST/2004/057 (ໄດ້ຖືກສະເໜີ) | ເພີ້ມລາຍໄດ້ຂອງການເຮັດໄຮ່ສວນ ໂດຍການສົ່ງເສີມການ ຈັດການປູກຕົ້ນໄມ້,ປູກໄມ້ສັກ ແລະຕົ້ນມອນໃນແຂວງ ຫຼວງພະບາງຂອງ ສ.ປ.ປ. ລາວ |
| FST/2005/100 | ເພີ້ມມູນຄ່າໃຫ້ຜະລິດຕະພັນສິນຄ້າໄມ້ລາວ |

## ແຜນງານຍ່ອຍ 2: ຄວາມຫຼາກຫຼາຍຂອງກະສິກຳເພື່ອ ເພີ້ມການຜະລິດຢູ່ເຂດລະບົບກະສິກຳໃນດິນຮາບພຽງຕ່ຳ

### ລະບົບການປູກເຂົ້າໃນດິນຮາບພຽງຕ່ຳ

ສອງໂຄງການໄດ້ສະແດງມຸມມອງທີ່ແຕກຕ່າງກັນກ່ຽວກັບລະບົບການປູກ ເຂົ້າ ແລະ ການສ້າງວຽກງານໃນໄລຍະທົດສະວັດທີ່ຜ່ານມາ ໂດຍການສະໜັບສະໜູນ ຂອງ ACIAR ແລະ IRRI ລາວ ນການແນະນຳຫຼາຍຢ່າງ, ການປະເມີນຜົນ ແລະການບໍ ລິຫານ ສະພາບແວດລ້ອມຂອງດິນເນີນສູງ ແລະດິນຮາບພຽງຕ່ຳ. ໂຄງການຫຼັກ ແມ່ນອອກແບບເພື່ອປັບປຸງການຜະລິດແລະ ຜົນປະໂຫຍດຂອງລະບົບການ ປູກເຂົ້າໃນດິນ ຮາບພຽງຕ່ຳ ແລະ ຍັງຊອກຄວາມແຕກຕ່າງໃນສະຖານທີ່ທີ່ ເຫມາະສົມໂດຍການເພີ້ມພືດຜົນທີ່ບໍ່ແມ່ນເຂົ້າໃຕ້ລະບົບຊົນລະປະທານໃນ ລະດູແລ້ງ. ນັກວິທະຍາສາດ ຂອງໂຄງ ການຕັ້ງໃຈຈະສະໜອງຊາວນາ ດ້ວຍພັນເຂົ້າ ປູກທີ່ແກ່ໄວ(ເຂົ້າດໍ) ແລະ ແນະນຳການ ປະຢັດແຮງງານ, ທົນຕໍ່ຄວາມ ແຫ້ງແລ້ງ, ວິທີຫວ່ານແລະໃຫຍ່ໄວໂດຍສະເພາະໃນເຂດ ຊົນລະປະທານ ໃນລະດູແລ້ງ.ພວກເຂົາຍັງຈະພະຍາຍາມແນະນຳພືດທີ່ຫາ ຜົນປະໂຫຍດ ໄດ້ຫຼາຍ ເຊັ່ນ ຫມາກສາລີ, ຖົ່ວເຫຼືອງ ແລະ ພືດຈຳພວກເມັດ ຕ່າງໆໃຫ້ ເຂດທີ່ມີຊົນລະ ປະທານ. ຫນຶ່ງຂອງຂໍ້ຈຳກັດ ໃນການຮັບເອົາລະບົບພັນເມັດເຂົ້າອັນແຕກ ຕ່າງນີ້ແມ່ນຢູ່ ບົນພື້ນຖານການໄຖນາຢູ່ໃນລາວແມ່ນບໍ່ມີເຄື່ອງຈັກໄຖນາທີ່ເຫມາະສົມ. ໂຄງການທີ່ກ່ຽວຂ້ອງມີຈຸດມຸ່ງຫມາຍທີ່ຈະພັດທະນາແລະທົດສອບຮູບແບບ ເດີມໃນຕົ້ນທຶນຕ່ຳ ເພື່ອການຜະລິດໃນທ້ອງຖິ່ນ.

| | |
|---|---|
| CIM/2006/041 | ເພີ້ມຜົນຜະລິດແລະກຳໄລຈາກລະບົບການປູກເຂົ້າໃນ ພື້ນທີ່ຮາບພຽງໃນ ສ.ປ.ປ. ລາວ |
| CIM/2007/027 | ການພັດທະນາການອະນຸລັກການເຮັດໄຮ່ນາການນຳ ໃຊ້ລົດໄຖນາສອງລໍ້ໃນ ກຳປູເຈຍ, ລາວ ແລະ ບັງກະລາ ເທດ |

## ປັບປຸງເພີ່ມຜົນຜະລິດລ້ຽງປາກະຊັງແຄມຝັ່ງ ແລະ ການປະມົງ

ເຖິງວ່າປາກະຊັງຈາກແຄມຝັ່ງນ້ຳຕາມລະດູ ແລະ ປາທີ່ຢູ່ໃນອ່າງເກັບນ້ຳເປັນ ແຫຼ່ງສັດຫຼັກທີ່ມີໂປຼຕີນຂອງປະຊາຊົນລາວ,ແຕ່ກໍ່ຍັງມີຊ່ອງວ່າງລະ ຫວ່າງ ການສະໜອງ ແລະ ຄວາມຕ້ອງການທີ່ລັດຖະບານລາວພະຍາຍາມ ເຮັດໃຫ້ນ້ອຍລົງໂດຍຜ່ານການພັດທະ ນາທີ່ພົວພັນກັບການປູກຝັງ ທາງນ້ຳ. ໂຄງການນີ້ມີເປົ້າໝາຍພັດທະນາເທັກໂນໂລຢີໃຫ້ປະຊາຊົນເຂົ້າຮ່ວມເຊິ່ງໃຫ້ ຜົນຜະລິດຈາກການຫາປາໃນບ່ອນທີ່ນ້ຳຖ້ວມແລະອ່າວເກັບ ນ້ຳ ແລະ ສະຫນັບສະຫນູນການຈັດການລ້ຽງປາກະຊັງໃນ ສປປລາວ

| | |
|---|---|
| FIS/2005/078 | ການພັດທະນາພື້ນຖານການລ້ຽງປາໃນສ.ປ.ປ. ລາວ |
| FIS/2006/137 (ໄດ້ຖືກສະເໜີ) | ການວິເຄາະສາມຖານຂໍ້ມູນຈາກຂໍ້ມູນການປະມົງຈາກ ແມ່ນ້ຳຂອງ |
| FIS/2006/183 | ການພັດທະນາເທັກໂນໂລຢີການເພາະລ້ຽງປາໃນລາວ |

## ທຶນການຄົ້ນຄວ້າກະສິກຳໃນລາວ

ທຶນການຄົ້ນຄວ້າກະສິກຳໃນລາວແມ່ນໃຫ້ການສະຫນັບສະຫນູນບັນດາ ໂຄງການນ້ອຍຢ່າງກວ້າງຂວາງທີ່ຮວມເອົາສອງຫົວຂໍ້ພ້ອມທັງໃຫ້ປະສົບ ການແກ່ນັກວິດທະຍາສາດລາວໃນການອອກແບບ ແລະຈັດການບັນດາ ໂຄງການຄົ້ນຄວ້າກະສິກຳ.

| | |
|---|---|
| ASEM/2006/060 | ທຶນການຄົ້ນຄວ້າກະສິກຳໃນລາວ (LARF) |

# ໂຄງການທີ່ປະຕິບັດໃນລາວ



## ACIAR — ສ່ວນໜຶ່ງຂອງແຜນງານຊ່ວຍເຫຼືອຂອງ ອອສເຕຣເລຍ

ACIAR ປະກອບເປັນສ່ວນໜຶ່ງຂອງການຊ່ວຍເຫຼືອຕ່າງປະເທດຂອງ ລັດຖະບານ ອອສ ເຕຣເລຍ ແລະດຳເນີນງານຕາມເປົ້າໝາຍຂອງໂຄງ ການຄືຊ່ວຍປະເທດທີ່ກຳລັງພັດທະ ນາເພື່ອຫລຸດຜ່ອນຄວາມທຸກຍາກ ແລະ ເພື່ອໃຫ້ໄດ້ຮັບການພັດທະນາແບບຍືນຍົງໂດຍ ສອດຄ່ອງກັບຜົນປະໂຫຍດຂອງຊາດ.ໂຄງການຊ່ວຍເຫຼືອນີ້ແມ່ນຖືກນຳທາງ ໂດຍບູລິມະ ສິດ 4 ຢ່າງ: ເລັ່ງການຂະຫຍາຍໂຕຂອງທຸລະກິດ,ສະໜັບສະໜູນໜ້າທີ່ ແລະສະພາບ ທີ່ມີປະສິດທິຜົນ,ລົງທຶນສ້າງຄົນແລະສົ່ງເສີມຄວາມໝັ້ນຄົງຂອງຂົງເຂດ ແລະການຮ່ວມມື.

ACIAR ໄດ້ຮ່ວມມືກັບ AusAID ໃນດ້ານບຸລິມະສິດອັນດຽວກັນ ໂດຍ ທີ່ທັງສອງອົງການໃຫ້ການສະໜັບສະໜູນຕໍ່ຈຸດເລັ່ງໃນໂຄງການຊ່ວຍເຫຼືອ ຂອງລັດຖະບານ.

ລະດັບຂອງປະຕິກິລິຍາທີ່ເກີດຂຶ້ນໃນແຜນງານຂັ້ນພະແນກ. ຄວາມຄິດລິເລີ້ມຮ່ວມຂອງ AusAID ແລະ ACIAR ລວມມີໂຄງການໃນ ປະເທດ ປາກີດສະຖານ, ຕີມໍຕາເວັນອອກ, ອັຟການິສະຖານ, ອິນໂດເນເຊຍ, ກຳປູເຈຍ, ອີຣັກ, ປາປົວນິວກີນີ ແລະຟີລິບປິນ. ACIAR ຍັງເປັນອົງການຮ່ວມແລະ ເປັນຜູ້ສະສະໜັບສະໜູນ ເວບໄຊ AusAID's Australian Development Gateway ທີ່ໄດ້ອອກປະກາດໃຊ້ໃນ ເດືອນກັນຍາ ປີ 2002 ເພື່ອຊ່ວຍເຊື່ອມຕໍ່ການແບ່ງແຍກດິຈິໂຕລ ດ້ວຍ ການເຮັດໃຫ້ປະເທດທີ່ກຳລັງພັດທະນາສາມາດເຂົ້າເຖິງຄວາມຮູ້ ສຳຄັນດ້ານການພັດທະນາ.

AusAID- ACIAR ຮ່ວມມືກັນໃນໂຄງການຫຼາຍຮູບແບບ. ໂຄງການເຫຼົ່ານີ້ຮວມມີ: AusAID ສ້າງໂຄງການຕາມໂຄງການຄົ້ນຄວ້າທີ່ ACIAR ມີຢູ່, ສ່ວນ ACIAR ກໍ່ໄດ້ສ້າງຕາມໂຄງການ ຂອງ AusAID ທີ່ບົ່ງບອກເຖິງຄວາມຕ້ອງການສະເພາະຂອງ R&D; ການ ພັດທະນາ ໂຄງການ ທີ່ ຄຽງຄູ່ກັນ, ACIAR ໄດ້ພັດທະນາ R&D ແລະ ການຈັດ ຕັ້ງ ກິດຈະກຳ, ປະຕິບັດຕາມການລົງທຶນຂອງ AusAID ໃນສະຖາບັນທີ່ແຂງແກ່ງ ແລະໂຄງສ້າງຂັ້ນພື້ນຖານ, ACIAR ໄດ້ພັດທະນາໂຄງການທີ່ໄດ້ ຕົກລົງ ຫຼື ໂຄງການຈຳ ເພາະການ ໂດຍ AusAID ໃຫ້ຂໍ້ມູນເຂົ້າໃສ່ການອອກແບບແລະກວດສອບ; AusAID ໄດ້ລົງທຶນໃນໂຄງການທີ່ອອກ ແບບໂດຍ ACIAR ເຊິ່ງແມ່ນສິ່ງຫຼັກຂອງຍຸດທະສາດຂອງ AusAID ແລະ ການພັດທະນາໂຄງການສຳຄັນ ແລະໄດ້ທຶນຮ່ວມກັນ. ນອກຈາກນັ້ນ ACIAR ຍັງໃຫ້ຊັບພະຍາກອນເທັກນິກແກ່ AusAID ເປັນບາງຄັ້ງແລະທັງສອງອົງການ ນີ້ຮ່ວມມືກັນພາຍໃຕ້ການຝຶກອົບຮົມຂັ້ນຫຼັງຈາກປະລິນຍາຕຣີ ແລະ ການຝຶກອົບຮົມ ອື່ນໆອີກນຳ.




**www.aciar.gov.au**


**Australian Centre for International Agricultural Research**
GPO Box 1571
Canberra ACT 2601

ໂທ: (+61 2) 6217 0500
ອິນເຕີເນັດ: www.aciar.gov.au
ອີເມລ: aciar@aciar.gov.au


